**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 2
## The roles of the enforcement and court judgement amanagement organ
ພາລະບົດບາດຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ

### 1. ຄວາມໝາຍ
ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານມີພາລະບົດບາດໃນການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານຕາມຂອບເຂດສິດ, ອຳນາດຂອງຕົນໃນການຊີ້ນຳ ແລະ ຄຸ້ມຄອງອົງການປະຕິບັດຄຳຕັດສິນຂອງສານທາງດ້ານວິຊາການ, ການເມືອງ-ແນວຄິດ,ການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກໃຫ້ມີຄວາມເປັນເອກະພາບ, ວ່ອງໄວ, ຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳບົນຫຼັກການ ແລະ ລະບຽບການກ່ຽວກັບການປະຕິບັດຄຳຕັດສິນຂອງສານ.

### 2. ລະບົບອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ
ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ ລວມມີ 04 ຂັ້ນຄື:

1) ກະຊວງຍຸຕິທຳ ມີສຳນັກງານຕັ້ງຢູ່ນະຄອນຫຼວງວຽງຈັນ;
2) ກົມຄຸ້ມຄອງການ ປະຕິບັດຄຳຕັດສິນຂອງສານ ມີສຳນັກງານຕັ້ງຢູ່ກະຊວງຍຸຕິທຳ, ນະຄອນຫຼວງວຽງຈັນ;
3) ພະແນກຍຸຕິທຳ ມີສຳນັກງານຕັ້ງຢູ່ບັນດາແຂວງ, ນະຄອນຫຼວງວຽງຈັນ;
4) ຫ້ອງການຍຸຕິທຳ ມີສຳນັກງານຕັ້ງຢູ່ບັນດາເມືອງ.

### 3. ພາລະບົດບາດ
#### 3.1. ກະຊວງຍຸຕິທຳ
ກະຊວງຍຸຕິທຳ ໃນຖານະເປັນເສນາທິການໃຫ້ແກ່ລັດຖະບານ ໃນຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ມີພາລະບົດບາດໃນການຄຸ້ມຄອງ, ຊີ້ນຳ ແລະ ກວດກາວຽກງານປະຕິບັດຄຳຕັດສິນຂອງສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການໃນຂອບເຂດທົ່ວປະເທດ, ມີພາລະບົດບາດຕົ້ນຕໍດັ່ງນີ້:

- ຄົ້ນຄວ້ານະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ ແລ້ວສະເໜີຕໍ່ລັດຖະບານພິຈາລະນາຮັບຮອງເອົາ;

- ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນ, ຊັ້ນຄົນຕ່າງໆ ເຂົ້າໃຈ ແລະ ຕື່ນຕົວປະຕິບັດ ທັງປະກອບຄຳເຫັນກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ ດ້ວຍວິທີການຕ່າງໆ;

- ຊີ້ນຳ, ຄຸ້ມຄອງ ແລະ ກວດກາດ້ານວິຊາການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ;

- ຄົ້ນຄວ້າວິໄຈສາເຫດຂອງຄຳຕັດສິນຂອງສານທີ່ບໍ່ສາມາດປະຕິບັດໄດ້ ແລ້ວສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າຊອກຫາວິທີແກ້ໄຂ;

- ປັບປຸງ, ໂຈະ, ຍົກເລີກ ຫລື ລົບລ້າງຄຳສັ່ງຂອງຫ້ອງການ ແລະ ໜ່ວຍງານ ປະຕິບັດຄຳຕັດສິນຂອງສານ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ສະເໜີໃຫ້ຂະແໜງ ການອື່ນ ລົບລ້າງນິຕິກຳຂອງຕົນ ທີ່ບໍ່ສອດຄ່ອງກັບການປະຕິບັດຄຳຕັດສິນຂອງສານ ຫຼື ລະບຽບກົດໝາຍ, ພ້ອມກັນນັ້ນ ກໍໃຫ້ຄຳແນະນຳ ເພື່ອປະຕິບັດຄຳຕັດສິນຂອງສານ ໃຫ້ຖືກຕ້ອງ;

- ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານຕາມການສະເໜີຂອງພະແນກຍຸຕິທຳແຂວງ, ນະຄອນ ໂດຍ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

- ກໍ່ສ້າງ, ຍົກລະດັບ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານການປະຕິບັດຄຳຕັດສິນຂອງສານ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ ແລະ ວິຊາສະເພາະ;

- ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການປະ ຕິບັດຄຳຕັດສິນຂອງສານ;

- ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

- ລາຍງານສະພາບການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ[1].

ເພື່ອປະຕິບັດໃຫ້ໄດ້ຕາມສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳທີ່ກ່າວມາຂ້າງເທິງນີ້, ກະຊວງຍຸຕິທຳໄດ້ມອບຄວາມຮັບຜິດຊອບໃຫ້ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຊຶ່ງເປັນກົມວິຊາການໜຶ່ງທີ່ສັງກັດໃນໂຄງປະກອບກົງຈັກຂອງກະຊວງຍຸຕິທຳ.

### 3.2. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ

ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຂຽນຕົວອັກສອນຫຍໍ້ວ່າ **"ກຄສ"** ແມ່ນກົມວິຊາການໜຶ່ງສັງກັດໃນໂຄງປະກອບກົງຈັກຂອງກະຊວງຍຸຕິທຳ, ມີພາລະບົດບາດເປັນເສນາທິການໃຫ້ຄະນະນຳກະຊວງຍຸຕິທຳໃນການຄຸ້ມຄອງມະຫາພາກທາງດ້ານວິຊາການ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ປະກອບມີ 4 ພະແນກ ຄື:

- ພະແນກສັງລວມ ແລະ ບໍລິຫານ;
- ພະແນກຄຸ້ມຄອງການປະຕິບັດຄຳຕັດສິນຄະດີແພ່ງ;
- ພະແນກຄຸ້ມຄອງການປະຕິບັດຄຳຕັດສິນຄະດີອາຍາ;
- ພະແນກຕິດຕາມ-ກວດກາ ແລະ ສະຖິຕິຄຳຕັດສິນຂອງສານ[2];

---

[1] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 10;

[2] ມາດຕາ 5 ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017

ມີພາລະບົດບາດຕົ້ນຕໍດັ່ງນີ້:

- ຄົ້ນຄ້ວາ, ເຊື່ອມຊຶມ ແລະ ຫັນແນວທາງ ,ນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ ມາເປັນແຜນການ, ແຜນງານ,ໂຄງການລະອຽດ ແລະ ປະຕິບັດໃຫ້ໄດ້ຮັບຜົນດີ;

- ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານການປະຕິບັດຄຳຕັດສິນຂອງສານ ໃຫ້ປະຊາຊົນເຂົ້າໃຈ ແລະ ຕື່ນຕົວປະຕິບັດ;

- ຄຸ້ມຄອງ, ຊີ້ນຳ ແລະ ກວດກາດ້ານວິຊາການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ;

- ຄົ້ນຄ້ວາ, ວິໄຈສາເຫດຂອງຄຳຕັດສິນຂອງສານ ທີ່ບໍ່ສາມາດປະຕິບັດໄດ້ ແລ້ວສະເໜີຕໍ່ຄະນະນຳ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາ;

- ຄົ້ນຄ້ວາຄຳຮ້ອງ, ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນກ່ຽວກັບການປະຕິບັດຄຳຕັດສິນຂອງສານ, ການກະທຳທີ່ລະເມີດກົດໝາຍຂອງພະນັກງານ ເພື່ອແກ້ໄຂ ຫຼື ລາຍງານໃຫ້ຂັ້ນເທິງພິຈາລະນາຢ່າງທັນການ;

- ຄົ້ນຄ້ວາ, ນຳສະເໜີຂັ້ນເທິງພິຈາລະນາລົບລ້າງຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ທີ່ບໍ່ສອດຄ່ອງຕາມລະບຽບກົດໝາຍ;

- ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານການປະຕິ ບັດຄຳຕັດສິນຂອງສານ;

- ສະຫຼຸບ, ສັງລວມສະຖິຕິການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ ເພື່ອລາຍງານຄະນະນຳກະຊວງ ຢ່າງເປັນປົກກະຕິ;

- ຄົ້ນຄ້ວາ, ສ້າງຫຼັກສູດ, ຕຳລາຝຶກອົບຮົມ ວຽກງານປະຕິບັດຄຳຕັດສິນຂອງສານ;

- ຄົ້ນຄວ້າ, ຂຶ້ນແຜນກໍ່ສ້າງ, ບຳລຸງຍົກລະດັບພະນັກງານ ທີ່ຮັບຜິດຊອບວຽກງານປະຕິບັດຄຳຕັດສິນຂອງສານໃນແຕ່ລະໄລຍະ;

- ເປັນເສນາທິການໃຫ້ຄະນະນຳກະຊວງ ໃນການຄົ້ນຄ້ວາ, ກະກຽມຕອບຄຳຖາມຂອງປະຊາຊົນ ແລະ ອົງການທີ່ກ່ຽວຂ້ອງກ່ຽວກັວຽກງານປະຕິບັດຄຳຕັດສິນຂອງສານ[3].

ນອກຈາກນັ້ນ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານຍັງມີສິດໃນການເຄື່ອນໄຫວວຽກງານຂອງຕົນຄື:

- ສະເໜີສ້າງ, ປັບປຸງກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕໍ່ຄະນະນຳກະຊວງເພື່ອພິຈາລະນາ;

- ອອກຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ໂຄງປະກອບການຂອງກົມ ແລະ ມີຄຳເຫັນຕໍ່ການສ້າງຕັ້ງ ຫຼື ຍຸບເລີກກົງຈັກການຂອງອົງການປະຕິບັດຄຳຕັດສິນຂອງສານ;

---

[3] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ (ໜ້າທີ 2)

- ສະເໜີບັນຈຸ, ສັບຊ້ອນ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານພາຍໃນກົມ ຕໍ່ຄະນະນຳກະຊວງ ເພື່ອພິຈາລະນາຕົກລົງ ແລະ ສະເໜີຄຳເຫັນຕໍ່ການສ້າງຕັ້ງ, ການແຕ່ງຕັ້ງພະນັກງານປະຕິບັດຄຳຕັດສິນຂອງສານ;

- ຊີ້ນຳ, ກວດກາ ແລະ ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ;

- ເຊີນຄູ່ຄວາມ, ບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າມາກົມເພື່ອປຶກສາຫາລື ຫຼື ສະໜອງຂໍ້ມູນກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ມີສິດເຂົ້າຮ່ວມກອງປະຊຸມປຶກສາຫາລື ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມການເຊື້ອເຊີນຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ຕາມການມອບໝາຍຂອງຄະນະນຳກະຊວງ;

- ສະເໜີຈັດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາບັນຫາທີ່ພົວພັນເຖິງການປະຕິບັດຄຳຕັດສິນຂອງສານ;

- ພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນກັບຕ່າງປະເທດ ກ່ຽວກັບການປະຕິບັດຄຳຕັດສິນຂອງສານຕາມການມອບໝາຍຂອງຄະນະນຳກະຊວງ;

- ນຳໃຊ້ງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ເພື່ອຮັບໃຊ້ເຂົ້າໃນວຽກງານວິຊາການ ແລະ ປະຕິບັດໜ້າທີ່ວຽກງານຂອງກົມ ໃຫ້ມີປະສິດທິພາບ[4].

- ຄົ້ນຄວ້ານິຕິກຳໃຕ້ກົດໝາຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ເພື່ອສະເໜີຕໍ່ ລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ;

- ຄົ້ນຄວ້າ ແລະ ຊອກຫາສາເຫດຂອງຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກສັບສົນ ໃນການປະຕິບັດເພື່ອລາຍງານຂໍທິດຊີ້ນຳຈາກ ລັດຖະມົນຕີ ກະຊວງຍຸຕິທຳ;

- ປ່ຽນແປງ, ໂຈະ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງຫ້ອງການ ຫຼື ໜ່ວຍງານປະຕິບັດຄຳຕັດສິນຂອງສານ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ແລະ ບໍ່ສອດຄ່ອງຕາມກົດໝາຍ, ພ້ອມທັງໃຫ້ຄຳແນະນຳ ເພື່ອປະຕິບັດຄຳຕັດສິນຂອງສານໃຫ້ຖືກຕ້ອງ;

- ຕິດຕາມ, ກວດກາ ແລະ ເກັບກຳສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງອົງການປະຕິບັດຄຳຕັດສິນຂອງສານ ລາຍງານຂໍທິດຊີ້ນຳ ຈາກລັດຖະມົນຕີ ກະຊວງຍຸຕິທຳ;

- ສະຫຼຸບລາຍງານ ການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະມົນຕີ ກະຊວງຍຸຕິທຳຊາບຢ່າງເປັນປົກກະຕິ.

**3.3. ພະແນກຍຸຕິທຳ**

ພະແນກຍຸຕິທຳແມ່ນໂຄງປະກອບກົງຈັກໜຶ່ງຂອງອົງການປົກຄອງແຂວງ, ນະຄອນຫຼວງ ຂຶ້ນກັບການຄຸ້ມຄອງຂອງອົງການປົກຄອງແຂວງ, ນະຄອນຫຼວງທາງດ້ານການເມືອງ-ແນວຄິດ ແລະ ການຊີ້ນຳທາງດ້ານວິຊາການຂອງກະຊວງຍຸຕິທຳ, ມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງແຂວງ, ນະຄອນຫຼວງກ່ຽວກັບການສ້າງ ແລະ ປັບປຸງນິຕິກຳຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຈັດຕັ້ງປະຕິບັດການໂຄສະນາເຜີຍແຜ່ກົດໝາຍ, ການສ້າງບຸກ

[4] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ໜ້າ 2

ຄະລາກອນກົດໝາຍໃຫ້ຮາກຖານ, ການບໍລິການກົດໝາຍ ແລະ ວຽກງານຍຸຕິທຳ ແລະ ການຮ່ວມມືກັບຕ່າງປະເທດກ່ຽວກັບກົດໝາຍ ແລະ ວຽກງານຍຸຕິທຳ[5].

ພະແນກຍຸຕິທຳແຂວງ, ນະຄອນຫຼວງໃນຖານະເປັນອົງການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານຂັ້ນທ້ອງຖິ່ນມີພາລະບົດບາດຕົ້ນຕໍດັ່ງນີ້:

- ຊີ້ນຳການປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເປັນເອກະພາບກ່ຽວກັບການປະຕິບັດຄຳຕັດສິນໃນທ້ອງຖິ່ນຂອງຕົນ;

- ຄຸ້ມຄອງທາງດ້ານງົບປະມານ ແລະ ກວດກາການປະຕິບັດໜ້າທີ່ວຽກງານຂອງຫ້ອງການປະຕິບັດຄຳຕັດສິນຂອງສານ;

- ສະເໜີຕໍ່ກະຊວງຍຸຕິທຳ ກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການ, ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານ ໂດຍໄດ້ຮັບການເຫັນດີຈາກອົງການປົກຄອງ ແຂວງ, ນະຄອນຫຼວງ;

- ສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ;

- ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນ, ຊັ້ນຄົນຕ່າງໆ ເຂົ້າໃຈ ແລະ ຕື່ນຕົວປະຕິບັດ ທັງປະກອບຄຳເຫັນກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ ດ້ວຍວິທີການຕ່າງໆ;

- ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

- ພົວພັນຮ່ວມມືກັບຕ່າງປະເທດກ່ຽວກັບການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຕາມການມອບໝາຍຂອງກະຊວງຍຸຕິທຳ;

- ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານໃຫ້ກະຊວງຍຸຕິທຳ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ[6].

ພະແນກຍຸຕິທຳແຂວງ ,ນະຄອນຫຼວງ ນອກຈາກສິດ ແລະ ໜ້າທີ່ ທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

- ຄົ້ນຄວ້າ ແລະ ມອບສຳນວນຄຳຕັດສິນຂອງສານໃຫ້ຫ້ອງການປະຕິບັດຄຳຕັດສິນຂອງສານ ບໍ່ໃຫ້ກາຍ ສາມວັນລັດຖະການ ນັບແຕ່ມື້ໄດ້ຮັບສຳນວນຄຳຕັດສິນຂອງສານເປັນຕົ້ນໄປ;

---

[5] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 1268/ກຍ, ລົງວັນທີ 16 ພະຈິກ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ

[6] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 11

- ກວດກາການເຄື່ອນໄຫວວຽກງານ ຂອງຫ້ອງການປະຕິບັດຄຳຕັດສິນຂອງສານ, ລວມທັງກວດ ກາການປະຕິບັດໜ້າທີ່ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ແລ້ວລາຍງານຕໍ່ກະຊວງຍຸຕິທຳ ແລະ ອົງການປົກຄອງຂັ້ນຂອງຕົນ;

- ສຶກສາອົບຮົມການເມືອງແນວຄິດ, ຄຸນສົມບັດສິນທຳປະຕິວັດໃຫ້ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ .

**3.4. ຫ້ອງການຍຸຕິທຳ**

ຫ້ອງການຍຸຕິທຳ ແມ່ນໂຄງປະກອບກົງຈັກໜຶ່ງຂອງອົງການປົກຄອງເມືອງ, ເທດສະບານ, ນະຄອນ ຂຶ້ນກັບການຄຸ້ມຄອງຂອງອົງການປົກຄອງເມືອງ, ນະຄອນ, ເທດສະບານທາງດ້ານການເມືອງ-ແນວຄິດ ແລະ ການຊີ້ນຳທາງດ້ານວິຊາການຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ; ມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງເມືອງ, ນະຄອນ, ເທດສະບານກ່ຽວກັບການສ້າງ ແລະ ປັບປຸງນິຕິກຳຂອງເມືອງ, ເຈົ້ານະຄອນ, ຫົວໜ້າເທດສະບານ,ຈັດຕັ້ງປະຕິບັດໂຄສະນາເຜີຍແຜ່ກົດໝາຍ.

ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ ໃນຖານະເປັນອົງການຄຸ້ມຄອງວຽກງານປະຕິບັດຄຳຕັດສິນຂອງສານຂັ້ນທ້ອງຖິ່ນມີພາລະບົດບາດຕົ້ນຕໍດັ່ງນີ້:

- ຄຸ້ມຄອງທາງດ້ານງົບປະມານ ແລະ ການກວດກາການປະຕິບັດໜ້າທີ່ວຽກງານຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານ;

- ສະເໜີຕໍ່ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເພື່ອໃຫ້ນຳສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການສ້າງຕັ້ງ ແລະ ປັບປຸງໜ່ວຍງານ, ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍໄດ້ຮັບການເຫັນດີ ຈາກອົງການປົກຄອງເມືອງ, ນະຄອນ, ເທດສະບານ;

- ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນ, ຊັ້ນຄົນຕ່າງໆເຂົ້າໃຈ ແລະຕື່ນຕົວປະຕິບັດ ທັງປະກອບ ຄຳເຫັນກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ ດ້ວຍວິທີການຕ່າງໆ;

- ຍົກລະດັບບຸກຄະລາກອນ ທີ່ຮັບຜິດຊອບວຽກງານການປະຕິບັດຄຳຕັດສິນຂອງສານ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ, ຄວາມຮູ້ ແລະ ຄວາມສາມາດ;

- ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

- ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານໃຫ້ພະແນກຍຸຕິທຳ ແລະ ອົງການປົກຄອງ ເມືອງ, ເທດສະບານ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ[7].

**ຫ້ອງການຍຸຕິທຳ ຍັງມີຄວາມຮັບຜິດຊອບ ດັ່ງນີ້:**

---

[7] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 12

- ຄົ້ນຄວ້າ ແລະ ມອບສຳນວນຄຳຕັດສິນຂອງສານໃຫ້ຫ້ອງການໜ່ວຍງານປະຕິບັດຄຳຕັດສິນຂອງສານບໍ່ໃຫ້ກາຍ , ສາມວັນ ລັດຖະການ ນັບແຕ່ມື້ໄດ້ຮັບສຳນວນຄຳຕັດສິນຂອງສານເປັນຕົ້ນໄປ;

- ກວດກາການເຄື່ອນໄຫວວຽກງານ ຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານລວມທັງກວດ , ກາການປະຕິບັດໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ແລ້ວລາຍງານຕໍ່ພະແນກຍຸຕິທຳ ແລະ ອີງການປົກຄອງຂັ້ນຂອງຕົນ;

- ສຶກສາອົບຮົມການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ ໃຫ້ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ .

**References:**

1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 10;
2. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະການເຄື່ອນໄຫວຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;
3. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 1268/ກຍ, ລົງວັນທີ 16 ພະຈິກ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ.